ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານໜອງຄ້ຽ ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 097 /ລອທ
ນະຄອນຫຼວງວຽງຈັນ,ເລກທີ: 14 JUL 2026

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື.

ເລື່ອງ : ລາຍງານຄວາມຄືບໜ້າ ແຜນປັບປຸງແກ້ໄຂການດ້ອຍຄ່າຂອງທຶນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ປະຈຳໄຕມາດ2 ປີ 2026.

- ອີງຕາມ ລະບຽບວ່າດ້ວຍການຈົດທະບຽນຮຸ້ນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023 ມາດຕາ 26.
- ອີງຕາມ ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 603/ຕລຊລ, ລົງວັນທີ 07 ພຶດສະພາ 2026
- ອີງຕາມ ແຜນປັບປຸງແກ້ໄຂການດ້ອຍຄ່າຂອງທຶນ ສະບັບເລກທີ 073/ທອລ,ລົງວັນທີ 25 ພຶດສະພາ 2026.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບລາຍງານຄວາມຄືບໜ້າການຂອງແຜນປັບປຸງແກ້ໄຂການດ້ອຍຄ່າຂອງທຶນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ(ລອທ) ໃນຊ່ວງໄຕມາດ1 ປະຈຳປີ 2026 ທີ່ຜ່ານມາ. ເຫັນວ່າ ບໍລິສັດ ມີລາຍຮັບເພີ່ມຂຶ້ນ ຈາກການບໍລິການ-ຂາຍສິນຄ້າ(ຜະລິດຕະພັນ). ເພີ່ມຂຶ້ນໃນອັດຕາສ່ວນ 3,74% ເມື່ອທຽບໃສ່ກັບປະລິມານການຈຳໜ່າຍໃນໄຕມາດທີ່ຜ່ານມາ ເຊິ່ງເປັນມູນຄ່າທັງໝົດ 422.06 ລ້ານກີບ ການເພີ່ມຂຶ້ນດັ່ງກ່າວໄດ້ມາຈາກການຂາຍສິນຄ້າ ດັ່ງນີ້:

ລາຍການສິນຄ້າ	ໄຕມາດ1(ລ້ານກີບ)	ໄຕມາດ2 (ລ້ານກີບ)	ເພີ່ມຂຶ້ນ/ຫຼຸດລົງ (ລ້ານກີບ)	ເພີ່ມຂຶ້ນ/ຫຼຸດລົງ (%)
ນ້ຳມັນປາມດິບCPO	10,490.59	9,341.81	(1,148.78)	(10.18)
ຕົ້ນກ້າປາມ	74,70	267.18	192.48	1.71
ກາກປາມ	712.59	1,980.50	1,267.90	11.24
ປຸ໋ຍ	1,4	111,87	110.46	0.98
ລວມ	**11,479.30**	**11,701.37**	**422,06**	**3.74**

❖ ບໍລິສັດຈະສືບຕໍ່ແຜນການດຳເນີນທຸລະກິດ

- ແຜນການຂາຍນ້ຳມັນປາມດິບ CPO: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດບວກກັບຄວາມຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025.
- ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025
- ແຜນການຂາຍປຸ໋ຍ ໃນປີ 2025 ບໍລິສັດໄດ້ສົ່ງເສີມຊາວກະສິກອນທີ່ເຮັດກະສິກຳອື່ນໆ ເຊັ່ນ: ເຂົ້າ, ມັນຕົ້ນ, ຢາງພາລາ, ແລະອື່ນໆເພື່ອເພີ່ມຍອດຂາຍ.
- ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງອອກ ແລະ ຄາດຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2025.
- ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດບົດວິຈານແລະນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ
- ຍິ່ງໄປກວ່ານັ້ນ, ບໍລິສັດ ໄດ້ຄົ້ນຄວ້າຫາເຕັກໂນໂລຊີໃໝ່ເຂົ້າໃນການຜະລິດ ເພື່ອຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍໃນການຜະລິດຕ່ຳໆໄປ.

ດັ່ງນັ້ນ, ຈຶ່ງເຮັດແຜນປັບປຸງສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ
ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ຜູ້ອຳນວຍການໃຫ່ຍ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ປອ. ເສດ ພັດທະນະມາດ